## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 29 ຕຸລາ 2023 (10-29-2023)

---

### ເປັນຫຍັງພວກເຮົາທົນທຸກ?

**ຈຸດສຳຄັນໃນບົດຮຽນ:** ພວກເຮົາອາດບໍ່ຮູ້ວ່າເປັນຫຍັງພວກເຮົາທົນທຸກ, ແຕ່ວ່າພຣະເຈົ້າຊົງພົບກັບພວກເຮົາໃນຄວາມທຸກທໍລະມານຂອງພວກເຮົາ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

*ບົດຮຽນທີ່ສຳຄັນບາງຢ່າງທີ່ທ່ານໄດ້ຮຽນຮູ້ດ້ວຍຄວາມຍາກລຳບາກແມ່ນຫຍັງ?*

ໃນການໂຕ້ຕອບຕ່າງໆຂອງຂ້າພະເຈົ້າກັບບັນດາຜູ້ທີ່ບໍ່ເຊື່ອ, ມີການໂຕ້ຖຽງໂດຍສະເພາະທີ່ຂ້າພະເຈົ້າໄດ້ຍິນເລື້ອຍໆ ຍ້ອນວ່າພວກເພິ່ນພຍາຍາມປະຕິເສດຄວາມເຊື່ອໃນພຣະເຈົ້າ.*"ພຣະເຈົ້າຊົງເປັນພຣະເຈົ້າທີ່ຊົງຮັກ, ຫຼືພຣະອົງຊົງເປັນພຣະເຈົ້າທີ່ຊົງຣິດອຳນາດທັງໝົດ, ແຕ່ພຣະອົງບໍ່ສາມາດເປັນທັງສອງຢ່າງໄດ້. ຖ້າຫາກພຣະອົງຊົງເປັນພຣະເຈົ້າທີ່ເຕັມປ່ຽມດ້ວຍຄວາມຮັກ, ພຣະອົງຈະບໍ່ຊົງຍອມໃຫ້ມີຄວາມທຸກທໍຣະມານ. ແລະເນື່ອງຈາກຄວາມທຸກທໍຣະມານມີຢູ່, ພຣະອົງບໍ່ຊົງຮັກ ແລະບໍ່ຊົງສົນພຣະທັຍ, ຫຼືພຣະອົງບໍ່ຊົງມີພລັງອຳນາດພຽງພໍທີ່ຈະຢຸດຢັ້ງມັນໄດ້"*

ເພື່ອທີ່ຈະເຮັດການໂຕ້ຖຽງດັ່ງກ່າວ, ຜູ້ຄົນຕ້ອງເລີ່ມຕົ້ນດ້ວຍການສົມມຸດຕິຖານທີ່ແນ່ນອນ. ນຶ່ງໃນການສົມມຸດຕິຖານແມ່ນ ພຣະເຈົ້າຊົງເປັນ**ສາເຫດ**ຂອງຄວາມທຸກທໍຣະມານທັງໝົດ. ສົມມຸດຕິຖານອີກອັນນຶ່ງຄືພຣະເຈົ້າຊົງບໍ່ແນ່ນອນ ແລະຊົງກຳນົດຄວາມທຸກທໍຣະມານໃຫ້ກັບບັນດາຜູ້ຄົນຕາມນ້ຳພຣະທັຍຂອງພຣະອົງ. ສົມມຸດຕິຖານທີ່ສາມຄືບໍ່ມີຈຸດມຸ່ງໝາຍໃດໆໃນຄວາມທຸກທໍຣະມານ. ນອກເໜືອຈາກການສົມມຸດຕິຖານເຫຼົ່ານັ້ນ, ບັນດາຜູ້ຄົນຈະຕ້ອງສົມມຸດວ່າ ຄຳນິຍາມສ່ວນບຸກຄົນຂອງພວກເຂົາເຈົ້າກ່ຽວກັບຄວາມທຸກທໍຣະມານນັ້ນ ໃຊ້ໄດ້ກັບທຸກຄົນແລະທຸກສະຖານະການ. **ແນ່ນອນ, ສິ່ງເຫຼົ່ານີ້ບໍ່ເປັນຄວາມຈິງ.**

ຄວາມເຂົ້າໃຈກ່ຽວກັບຄວາມທຸກທໍຣະມານຕ້ອງໃຊ້ຄວາມຄິດທີ່ເລິກເຊິ່ງຫຼາຍກວ່ານັ້ນ, ແລະ ໂຢບ ຊຶ່ງເປັນຜູ້ຮັບໃຊ້ທີ່ຕ້ອງທົນທຸກທໍຣະມານໃນພຣະຄັມພີພາກພຣະສັນຍາເດີມເປັນຈຸດຍືນທີ່ຍິ່ງໃຫຍ່ສຳລັບເລື່ອງນັ້ນ. ດັ່ງນັ້ນ, ພວກເຮົາສາມາດຮຽນຮູ້ຫຍັງແດ່ກ່ຽວກັບຄວາມທຸກທໍຣະມານຈາກຊີວິດຂອງໂຢບ?

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

#### 1. ໂຢບ 30:26-31

26 *ແຕ່ເມື່ອຂ້ອຍຊອກຫາການດີ, ການຮ້າຍກໍມາເຖິງ ແລະເມື່ອຂ້ອຍຄອຍຖ້າຄວາມສວ່າງ, ຄວາມມືດກໍມາເຖິງ.* 27 *ຈິດໃຈຂອງຂ້ອຍ*
*ຮ້ອນຮົນບໍ່ເຄີຍສງົບເລີຍ; ວັນຂອງຄວາມທຸກໃຈມາພົບຂ້ອຍ.* 28 *ຂ້ອຍໄດ້ໄວ້ທຸກ, ບໍ່ແມ່ນດ້ວຍແດດ. ຂ້ອຍຢືນຂຶ້ນໃນທີ່ຊຸມນຸມຊົນແລະ*
*ຮ້ອງຂໍຄວາມຊ່ວຍເຫລືອ.* 29 *ຂ້ອຍໄດ້ກາຍເປັນພີ່ນ້ອງກັບຝູງໝາໃນແລະເປັນເພື່ອນກັບນົກກະຈອກເທດ.* 30 *ຜີວໜັງຂອງຂ້ອຍດຳ,*
*ແລະກະດູກຂອງຂ້ອຍຮ້ອນເໝືອນໄຟໄໝ້.* 31 *ເພາະສະນັ້ນສຽງພິນຄູ່ຂອງຂ້ອຍກາຍເປັນສຽງຄວາມທຸກໂສກ ແລະສຽງຂຸ່ຍຂອງຂ້ອຍ*
*ກາຍເປັນສຽງຂອງຜູ້ທີ່ຮ້ອງໄຫ້"*

ເຣື່ອງລາວຊີວິດຂອງໂຢບເປີດຂຶ້ນໂດຍຊາຕານຂໍອະນຸຍາດຈາກພຣະເຈົ້າເພື່ອທົດສອບໂຢບ ເພື່ອເປີດເຜີຍຄວາມເລິກລັບຂອງຄວາມເຊື່ອຂອງໂຢບແລະພຣະເຈົ້າໄດ້ຊົງອະນຸຍາດໃຫ້ຊາຕານເຮັດເຊັ່ນນັ້ນ. ໂຢບໄດ້ຖືກຖອດຖອນເກືອບທຸກຢ່າງທີ່ລາວມີມາ, ຮວມ

ທັງຊັບສິນເງິນທອງ, ລູກໆ, ແລະແມ່ນແຕ່ສຸຂພາບຂອງລາວ. ບັນດາເພື່ອນຝູງທີ່ໃກ້ຊິດໄດ້ມາຊ່ອຍປອບໃຈລາວ, ແຕ່ແທນທີ່ພວກເພິ່ນໄດ້ຕຳໜິຕິຕຽນລາວ. ແນ່ນອນທີ່ສຸດ, ລາວຍັງຄົງສັດຊື່, ແຕ່ໃນຄວາມທົນທຸກທໍຣະມານນັ້ນ ລາວໄດ້ຖາມພຣະເຈົ້າວ່າ ເປັນຫຍັງເຫດການເຫຼົ່ານີ້ຈຶ່ງເກີດຂຶ້ນ? ພວກເຮົາໄດ້ຍິນຄວາມສິ້ນຫວັງຂອງໂຢບໃນຂໍ້ພຣະຄຳເຫຼົ່ານີ້. ລາວໄດ້ດຳເນີນຊີວິດດ້ວຍຄວາມທ່ຽງທັມ, ແລະລາວໄດ້ມີ “**ຄວາມຫວັງທີ່ດີ**” ແຕ່ລາວໄດ້ປະສົບກັບສິ່ງທີ່ກົງກັນຂ້າມ. ໃນຫົວໃຈຂອງສິ່ງທີ່ໂຢບຮູ້ສຶກແມ່ນຄຳຖາມທີ່ໂດຍບໍ່ສົງສັຍ, ພວກເຮົາໄດ້ຖາມໃນເວລາໃດເວລານຶ່ງ. ມັນເປັນຄຳຖາມທົ່ວໄປຂອງໂລກຄື: ເປັນຫຍັງຂ້ອຍຈຶ່ງຕອ້ງທົນທຸກທໍຣະມານ?

ຊີວິດຂອງໂຢບຊີ້ໃຫ້ເຫັນນຶ່ງເຫດຜົນສຳລັບຄວາມທົນທຸກທໍຣະມານຄື: ມັນແມ່ນວຽກງານໂດຍກົງຂອງຊາຕານເອງ. ໃນບົດເລີ່ມຕົ້ນຂອງພຣະຄັມພີໂຢບ, ພຣະເຈົ້າໄດ້ຊົງອະນຸຍາດໃຫ້ຊາຕານເຂົ້າເຖິງຊີວິດຂອງໂຢບເພື່ອທົດສອບລາວ. ພວກເຮົາອາດຈະບໍ່ຮູ້ເຫດຜົນທັງໝົດຢູ່ເບື້ອງຫຼັງຂອງການຊົງອະນຸຍາດຂອງພຣະເຈົ້າ, ແຕ່ພວກເຮົາຮູ້ວ່າຊາຕານ ສາມາດດຳເນີນການໃນວິທີທາງນັ້ນ. ມີເຫດຜົນພື້ນຖານຫຼາຍກວ່າທີ່ວ່າຄວາມທົນທຸກທໍຣະມານມີຢູ່. ມັນໄດ້ຖືກອະທິບາຍຢູ່ໃນເຣື່ອງລາວຂອງການຕົກຕ່ຳຂອງອາດາມແລະເອວາ (ປຖກ 3). ກ່ອນທີ່ພວກເພິ່ນຈະເຮັດບາບ, ການຊົງສ້າງຂອງພຣະເຈົ້າແມ່ນສົມບູນແບບ. ແຕ່ວ່າໃນເມື່ອພວກເພິ່ນໄດ້ລະເມີດພຣະດຳຣັດ(ຄຳສັ່ງ)ຂອງພຣະເຈົ້າ ແລະຄວາມບາບໄດ້ເຂົ້າມາໃນໂລກ, ການຊົງສ້າງທັງໝົດຖືກເສື່ອມເສັຽຄື: ທັງໂລກທັມມະຊາດແລະວິນຍານຂອງມະນຸດ. ໃນຈຸດນັ້ນ, ຄວາມຊົ່ວຮ້າຍໄດ້ເຂົ້າໄປໃນຮູບແລະກາຍເປັນແຫຼ່ງທີ່ມາຂອງຄວາມທົນທຸກທໍຣະມານ. **ການຊົງສ້າງທັງໝົດລົ້ມເຫຼວລົງເພາະວ່າບັນພະບຸຣຸດຂອງພວກເຮົາບໍ່ໄດ້ເຊື່ອຟັງພຣະເຈົ້າ**.

ຄວາມຊົ່ວຮ້າຍມີຢູ່ໃນໂລກ, ແຕ່ການບໍ່ເຊື່ອຟັງສ່ວນຕົວຂອງພວກເຮົາສາມາດເປັນເຫດໃຫ້ພວກເຮົາທຸກທໍຣະມານ. ໃນພຣະຄັມພີພຣະບັນຍັດສອງ ບົດທີ່ 28, ພຣະເຈົ້າໄດ້ຊົງເປີດເຜີຍພຣະພອນແຫ່ງການເຊື່ອຟັງ ແລະຄຳສາບແຊ່ງສຳລັບການບໍ່ເຊື່ອຟັງ. ໃນທີ່ນີ້, ພຣະເຈົ້າໄດ້ຊົງເປີດເຜີຍທັມມະຊາດຂອງຄວາມຊອບທັມແລະຂອງຄວາມຍຸຕິທັມຂອງພຣະອົງ, ແລະຄວາມທຸກທໍຣະມານຈະເກີດຂຶ້ນຢ່າງແນ່ນອນ ເມື່ອພວກເຮົາບໍ່ເຊື່ອຟັງພຣະອົງ. ແຕ່ໜ້າເສັຽດາຍ, ເຖິງແມ່ນວ່າພວກເຮົາບໍ່ໄດ້ເຮັດຜິດ, ພວກເຮົາຍັງສາມາດທົນທຸກດ້ວຍສາເຫດຂອງການຕັດສິນໃຈ(ເລືອກ)ຜິດຂອງຄົນອື່ນ. ຕອນນີ້, ໂຢບທຸກທໍຣະມານແລະເຫັນອະນາຄົດຂອງລາວລຸກຂຶ້ນໃນຄວັນໄຟ. ກ່ອນໜ້ານີ້, ລາວໄດ້ມີຄວາມຈະເຣີນຮຸ່ງເຮືອງ, ແລະລາວໄດ້ຄາດຫວັງຢ່າງເຕັມປ່ຽມວ່າລາວຈະມີຊີວິດທີ່ຍືນຍົງ. ແຕ່ສິ່ງທີ່ລາວໄດ້ພົບເຫັນຄື: **ຄວາມຊົ່ວຮ້າຍ**, **ຄວາມມືດ**, **ຄວາມທຸກ**, ແລະ **ຄວາມໂສກເສົ້າ**. ບໍ່ມີຄຳຖາມກ່ຽວກັບມັນ, ພວກເຮົາອາສັຍຢູ່ໃນໂລກທີ່ມີການໃຫ້ຄວາມທຸກ. ໃນເວລາດຽວກັນ, ຄວາມຈິງຂອງຄວາມທຸກບໍ່ແມ່ນຈຸດຈົບຂອງເຣື່ອງ. ພຣະເຈົ້າຊົງສະຖິດຢູ່ກັບພວກເຮົາຕລອດໄປ, ເຖິງແມ່ນວ່າໃນທ່າມກາງຂອງຄວາມທຸກທໍຣະມານຂອງພວກເຮົາ, ແລະໃນພຣະຄຣິດ, ພວກເຮົາສາມາດມີປະສົບການທີ່ປອບໂຍນຂອງການຊົງສະຖິດຢູ່ນຳຂອງພຣະເຈົ້າ.

*ມີບາງວິທີໃດແດ່ທີ່ບັນດາຜູ້ຄົນພຍາຍາມຮັບມືກັບຄວາມທຸກທໍຣະມານ?*

## 2. ໂຢບ 42:1-3

*1 ຕໍ່ມາໂຢບໄດ້ກາບທູນພຣະຜູ້ເປັນເຈົ້າວ່າ: 2 ຂ້າແດ່ພຣະຜູ້ເປັນເຈົ້າ ຂ້ານ້ອຍຮູ້ວ່າພຣະອົງຊົງຣິດທານຸພາບສູງສຸດ ພຣະອົງຊົງກະທຳ*
*ທຸກສິ່ງໄດ້. 3 ພຣະອົງຊົງຖາມວ່າ, “ປັນຫຍັງຂ້ານ້ອຍຈຶ່ງກ້າໄຕ່ຖາມການກະທຳຂອງພຣະອົງ?” ໃນເມື່ອຂ້ານ້ອຍຍັງເປັນຄົນໂງ່ຫຼາຍ*
*ຂ້ານ້ອຍເວົ້າເຖິງສິ່ງທີ່ຂ້ານ້ອຍບໍ່ເຂົ້າໃຈ, ສິ່ງທີ່ປລາດເກີນສຳລັບຂ້ານ້ອຍ.*

ໃນພຣະຄັມພີໂຢບ ບົດທີ່ 38, ພຣະເຈົ້າໄດ້ຊົງຕອບໂຢບ. ເປັນເວລາຕັ້ງ 4 ບົດ, ພຣະເຈົ້າໄດ້ຊົງຖາມໂຢບຄຳຖາມຫຼັງຈາກຄຳຖາມ, ແຕ່ພຣະອົງບໍ່ຊົງໄດ້ໃຫ້ເຫດຜົນທີ່ແນ່ນອນສຳລັບຄວາມທຸກທໍຣະມານຂອງລາວ. ພຣະເຈົ້າບໍ່ຊົງໄດ້ພຍາຍາມຫາເຫດຜົນທີ່ພຣະອົງຊົງຍອມໃຫ້ໂຢບທົນທຸກ. ກົງກັນຂ້າມ, ພຣະເຈົ້າໄດ້ຊົງພຍາຍາມເປີດເຜີຍພຣະອົງເອງໃຫ້ໂຢບຮູ້ຫຼາຍຂຶ້ນ. ໃນ 4 ບົດເຫຼົ່ານັ້ນ, ພຣະເຈົ້າໄດ້ຊົງກ່າວເຖິງວິທີທາງຂອງພຣະອົງທີ່ເກີນກວ່າຄວາມເຂົ້າໃຈຂອງໂຢບ. ພຣະອົງຊົງໄດ້ບັນລະຍາຍເຖິງພຣະຣິດທານຸພາບອັນຍິ່ງໃຫຍ່ຂອງພຣະອົງ ໃນຄວາມສາມາດໃນການຊົງສ້າງ(ຈັກກະວານ). ຈາກນັ້ນພຣະເຈົ້າໄດ້ຊົງທ້າທາຍໂຢບໃຫ້ຕອບໂຕ້ຢ່າງມີເຫດຜົນວ່າເປັນຫຍັງ ລາວຈຶ່ງມີຄວາມຮູ້ສຶກວ່າມີຄຸນສົມບັດທີ່ຈະຕັດສິນແຮງຈູງໃຈແລະການຊົງກະທຳຂອງພຣະເຈົ້າ.

ໃນພຣະຄັມພີ ໂຢບ ບົດທີ່ 42 ຂໍ້ 1 ຫາ 3, ຕາຂອງໂຢບໄດ້ຖືກມືນຂຶ້ນໃນຂນະທີ່ລາວຄຶດສະເດືອກໄດ້ວ່າລາວບໍ່ມີຄຸນສົມບັດທີ່ຈະຕັດສິນພຣະເຈົ້າ. ລາວໄດ້ຮັບຮູ້ວ່າພຣະເຈົ້າຊົງມີເຫດຜົນຫຼາຍຢ່າງທີ່ຈະຊົງຍອມໃຫ້ຄວາມທຸກທໍຣະມານທີ່ລາວບໍ່ມີຄຸນສົມບັດທີ່ຈະຖາມ: *"ຂ້ານ້ອຍເວົ້າເຖິງສິ່ງທີ່ຂ້ານ້ອຍບໍ່ເຂົ້າໃຈ, ສິ່ງທີ່ປລາດເກີນສຳລັບຂ້ານ້ອຍ."* ແທ້ຈິງແລ້ວ, ພຣະເຈົ້າຊົງສາມາດດຶງຜົນທີ່ໄດ້ຮັບໃນທາງບວກຈາກຄວາມທຸກທໍຣະມານ. ໃນຂນະທີ່ຄວາມທຸກທໍຣະມານ, ໂດຍຄຳນິຍາມ, ບໍ່ແມ່ນຄວາມ ພຶງພໍໃຈກໍຕາມ ແຕ່ມັນກໍບໍ່ໄດ້ໄຮ້ຄຸນຄ່າເຊັ່ນດຽວກັນ. ດັ່ງນັ້ນ, ແມ່ນຫຍັງຄືຜົນທີ່ໄດ້ຮັບໃນທາງບວກບາງຢ່າງທີ່ອາດເກີດຂຶ້ນຈາກຄວາມທຸກທໍຣະມານ?

- **ຄວາມເຂົ້າໃຈເລິກເຊິ່ງ.** ຄວາມທຸກທໍຣະມານສາມາດເຮັດໃຫ້ບຸກຄົນມີຄວາມເຂົ້າໃຈເລິກເຊິ່ງກ່ຽວກັບຄວາມສັມພັນສ່ວນຕົວຂອງລາວກັບພຣະເຈົ້າ. ໃນຕອນທຳອິດໂຢບໄດ້ເຊື່ອວ່າ ດ້ວຍເຫດທີ່ລາວໄດ້ຕິດຕາມພຣະເຈົ້າແລະມີຊີວິດທີ່ດີ, ພຣະເຈົ້າຈະຊົງໃຫ້ລາວມີຄວາມຈະເຣີນຮຸ່ງເຮືອງຢູ່ໃນໂລກນີ້. ແຕ່ວ່າການຂາດຄວາມເຂົ້າໃຈໄດ້ເປັນອຸປສັກໃນຄວາມສັມພັນຂອງລາວກັບພຣະເຈົ້າ. ໃນ ຄວາມທຸກທໍຣະມານຂອງລາວ, ໂຢບໄດ້ຮັບຮູ້ເຖິງຄວາມບົກພ່ອງຂອງລາວ.
- **ເປັນພຍານແກ່ຜູ້ທີ່ບໍ່ເຊື່ອ.** ຄວາມທຸກທໍຣະມານສາມາດເປີດໂອກາດໃຫ້ຜູ້ເຊື່ອໄດ້ເປັນພຍານແກ່ຜູ້ທີ່ບໍ່ເຊື່ອ. ພວກເຮົາໄດ້ເຫັນກໍລະນີຂອງເຣື່ອງນີ້ໃນພຣະຄັມພີ ກິຈການ ບົດທີ່ 16. ອັຄສາວົກໂປໂລແລະຊີລາ ໄດ້ເທສນາໃນເມືອງຟີລິບປອຍໃນເມື່ອໂປໂລໄດ້ຂັບໄລ່ວິນຍານຊົ່ວອອກຈາກໝໍດູ (fortune-teller).
- **ນຳພວກເຮົາໄປຫາພຣະເຈົ້າ.** ຄວາມທຸກທໍຣະມານສາມາດນຳຜູ້ທີ່ບໍ່ເຊື່ອໄປຫາພຣະເຈົ້າ. ການກັບໃຈໃໝ່ສ່ວນຕົວຂອງຂ້າພະເຈົ້າໄດ້ເກີດຂຶ້ນໃນຕອນທີ່ຍັງເປັນວັຍລຸ້ນແລະຕ້ອງໄດ້ຜະເຊີນໜ້າກັບກົດໝາຍ. ໃນກໍລະນີຂອງຂ້າພະເຈົ້າ, ມັນແມ່ນການລະເມີດກົດຈະລາຈອນເລັກນ້ອຍ, ແຕ່ເປັນປະສົບການເຈັບປວດທາງຈິດໃຈພຽງພໍທີ່ຈະຫັນໄປຫາພຣະເຈົ້າສຳລັບການບັນເທົາທຸກ.
- **ເຮັດໃຫ້ເຮົາເປັນເໝືອນພຣະຄຣິດຫຼາຍຂຶ້ນ.** ຄວາມທຸກທໍຣະມານສາມາດເປັນເຫດໃຫ້ບັນດາຜູ້ທີ່ເຊື່ອໃຫ້ໄດ້ຮັບການສອດຄ່ອງກັບພຣະລັກສະນະຂອງອົງພຣະຄຣິດ. ອັຄສາວົກໂປໂລໄດ້ມອງເຫັນຊີວິດຂອງເພິ່ນເປັນການສູນເສັຽອັນຍິ່ງໃຫຍ່ແຕ່ເພິ່ນກໍ່ໄດ້ຍອມຮັບວ່າເພິ່ນໄດ້ຮັບຫຼາຍກວ່າສິ່ງທີ່ໄດ້ສູນເສັຽໄປແລ້ວນັ້ນ.*"ເພາະເຫດພຣະອົງນັ້ນ, ເຮົາຈຶ່ງໄດ້ຍອມສລະສິ່ງສາລະພັດ ແລະຖືວ່າສິ່ງເຫລົ່ານັ້ນເປັນເໝືອນຂີ້ເຫຍື້ອ ເພື່ອຈະໄດ້ອົງພຣະຄຣິດມາເປັນປໂຍດແກ່ເຮົາ"* (ຟລປ 3:8).

**<u>ຄວາມທຸກທໍຣະມານເກີດຂຶ້ນ</u>.** ມັນເປັນພາກສ່ວນນຶ່ງຂອງເງື່ອນໄຂຂອງມະນຸດຊາດໃນຂນະທີ່ພວກເຮົາດຳເນີນຊີວິດຢູ່ໃນໂລກທີ່ເສື່ອມຊາມ. ໃນຂນະທີ່ພວກເຮົາອາດຈະບໍ່ເຂົ້າໃຈວ່າເປັນຫຍັງພວກເຮົາຈຶ່ງທົນທຸກທໍຣະມານໃນສະຖານະການໃດກໍຕາມ, ພວກເຮົາສາມາດໝັ້ນໃຈວ່າ ພວກເຮົາສາມາດວາງໃຈພຣະຜູ້ເປັນເຈົ້າ, ຜ່ານທຸກສະຖານະການ, ແລະພຣະອົງຈະຊົງໃຊ້ມັນໃນຊີວິດຂອງພວກເຮົາເພື່ອບັນລຸພຣະປະສົງອັນຍິ່ງໃຫຍ່ກວ່າຂອງພຣະອົງ.

*ຄວາມຈິງອັນໃດກ່ຽວກັບພຣະເຈົ້າທີ່ໄດ້ໃຫ້ກຳລັງໃຈທ່ານ ໃນເມື່ອທ່ານພວມມີຄວາມທຸກທໍຣະມານ?*

## 3. ໂຢບ 42:4-6

4 *"ພຣະອົງໄດ້ຊົງບອກໃຫ້ຂ້ານ້ອຍຮັບຟັງເວລາພຣະອົງຊົງກ່າວ ແລະໃຫ້ພຍາຍາມຕອບຄຳຖາມຂອງພຣະອົງ."* 5 *ຂນະນັ້ນ, ຂ້ານ້ອຍ*
*ຮູ້ແຕ່ສິ່ງທີ່ຄົນອື່ນບອກເທົ່ານັ້ນ ແຕ່ບັດນີ້ຂ້ານ້ອຍໄດ້ເຫັນພຣະອົງດ້ວຍຕາຂອງຂ້ານ້ອຍເອງ.* 6 *ດັ່ງນັ້ນ, ຂ້ານ້ອຍຈຶ່ງລະອາຍຕໍ່ສິ່ງທັງ*
*ປວງທີ່ຂ້ານ້ອຍໄດ້ກ່າວ. ຂ້ານ້ອຍເສັຽໃຈ ຈຶ່ງນັ່ງຢູ່ທີ່ຂີ້ຝຸ່ນດິນ ແລະຂີ້ເຖົ່າ.*

ພວກເຮົາຢູ່ໃນຍຸກໃນສມັຍທີ່ມີການຄົ້ນພົບທີ່ໜ້າອັສຈັນຢ່າງແທ້ຈິງ. ໃນດາຣາສາດ, ໂດຍກ້ອງສ່ອງທາງໄກຂະນິດໃໝ່ໆພວກເຮົາສາມາດເຫັນສິ່ງຕ່າງໆໃນຈັກກະວານທີ່ບໍ່ເຄີຍເຫັນມາກ່ອນ. ໃນວິທະຍາສາດທາງແພດ, ມີການຄົ້ນພົບທຸກວັນທີ່ໃຫ້ການບົ່ງມະຕິພະຍາດແລະການປິ່ນປົວພະຍາດແບບໃໝ່ຊຶ່ງໃນອະດີດບໍ່ສາມາດປິ່ນປົວໄດ້. ແລະມີບາງສິ່ງບາງຢ່າງທີ່ເກີນຄວາມເຂົ້າໃຈຂອງທຸກຄົນ: <u>ພຣະເຈົ້າຊົງດຳເນີນກິຈການໃນເອທີທີ່ຢູ່ນອກເໜືອການດຳເນີນຢູ່ຕາມທັມມະຊາດຂອງພວກເຮົາ</u>. ມີສິ່ງຕ່າງໆກ່ຽວກັບຄວາມເປັນຈິງທາງຈິດວິນຍານທີ່ພຣະອົງໄດ້ຊົງເປີດເຜີຍໃຫ້ພວກເຮົາໄດ້ຮູ້. ແຕ່ມີຫຼາຍສິ່ງທີ່ເກີນກວ່າຄວາມສາມາດຂອງພວກເຮົາທີ່ຈະເຂົ້າໃຈໄດ້-ແມ່ນແຕ່ບັນດານັກສາສນາສາດທີ່ມີການສຶກສາສູງທີ່ສຸດກໍ່ຕາມ. <u>ພວກເຮົາສາມາດ**ຮູ້**ວ່າພຣະເຈົ້າຊົງດຳຣົງຢູ່</u>,<u>ແຕ່ພວກເຮົາບໍ່ສາມາດຮູ້</u>

ວ່າພຣະອົງຊົງດຳຣົງຢູ່**ຢ່າງໃດ**. ພວກເຮົາສາມາດຮູ້ວ່າພຣະອົງຊົງຮັກພວກເຮົາ, ແຕ່ວ່າພວກເຮົາບໍ່ສາມາດແຍກແຍະ(ພິຈາລະນາ) ແຮງຈູງພຣະທັຍ(ໃຈ)ໃນການຊົງສ້າງຂອງພຣະອົງໄດ້.

*ແມ່ນຫຍັງຄືຄວາມແຕກຕ່າງລະຫວ່າງ ການຮູ້ກ່ຽວກັບພຣະເຈົ້າ ແລະການຮູ້ຈັກພຣະເຈົ້າ?*

ຂອບເຂດຄວາມທຸກທໍຣະມານຂອງໂຢບແມ່ນເກີນກວ່າຄວາມທຸກລຳບາກທີ່ພວກເຮົາສ່ວນຫຼາຍຈະປະສົບໃນຊີວິດ, ແຕ່ເຮົາທຸກຄົນກໍປະເຊີນໜ້າກັບຄວາມຫຍຸ້ງຍາກ. ດ້ວຍເຫດນີ້, ພວກເຮົາດັ່ງດຽວກັບໂຢບຕ້ອງການຢາກຮູ້ຄຳວ່າ "**ເປັນຫຍັງ**" ທີ່ຢູ່ເບື້ອງຫຼັງສິ່ງທີ່ພວກເຮົາກຳລັງປະເຊີນຢູ່. ພວກເຮົາອາດຈະບໍ່ມີວັນຮຽນຮູ້ເຫດຜົນໃນຊີວິດນີ້, ແຕ່ພວກເຮົາສາມາດຮູ້ແລະໄວ້ວາງໃຈວ່າ ພຣະເຈົ້າຊົງຮັກພວກເຮົາ, ແລະພຣະອົງຊົງກຳລັງດຳເນີນການຕາມແຜນທີ່ຈະບັນລຸຈຸດປະສົງອັນຍິ່ງໃຫຍ່ຂອງພຣະອົງສຳລັບຊີວິດຂອງພວກເຮົາ.

ນັ້ນແມ່ນສິ່ງທີ່ໄດ້ເກີດຂຶ້ນກັບໂຢບ. ພຣະເຈົ້າບໍ່ເຄີຍຕອບຄຳຖາມຂອງໂຢບວ່າ **ເປັນຫຍັງ** ລາວຈຶ່ງທົນທຸກທໍຣະມານ. ແຕ່ວ່າໃນການຕອບໂຕ້ຂອງລາວກັບພຣະເຈົ້າ, ໂຢບຈຶ່ງເຂົ້າໃຈວ່າການມີຄວາມຮູ້ຄົບຖ້ວນນັ້ນບໍ່ຈຳເປັນ. ສິ່ງດຽວທີ່ມີຄວາມສຳຄັນຢ່າງແທ້ຈິງແມ່ນພຣະເຈົ້າຊົງສະຖິດຢູ່ກັບລາວ. ເມື່ອໂຢບໄດ້ສຳນຶກເຖິງຄວາມເປັນຈິງ, ລາວໄດ້ຖິ້ມໃຈເກົ່າເອົາໃຈໃໝ່ໂດຍທັນທີທັນໃດແລະອ້ອນວອນຂໍການຊົງໃຫ້ອະພັຍຈາກພຣະເຈົ້າ. *ຄວາມສັມພັນກັບພຣະເຈົ້າແມ່ນສຳຄັນກວ່າການຮູ້ທຸກລາຍລະອຽດກ່ຽວກັບສິ່ງທີ່ຢູ່ນອກເໜືອຄວາມເຂົ້າໃຈຂອງລາວ*.

**ບໍ່ວ່າສະຖານະການຈະເປັນແບບໃດກໍ່ຕາມ, ພວກເຮົາສາມາດປະສົບການເຊັ່ນດຽວກັນ ໃນການຊົງສະຖິດຢູ່ນຳຂອງພຣະເຈົ້າ. ແລະໃນເມື່ອພວກເຮົາປະສົບການເຊັ່ນນັ້ນ, ການຊົງສະຖິດຢູ່ນຳຂອງພຣະອົງຈະຊົງຢູ່ເໜືອສິ່ງອື່ນໃດທັງສິ້ນ.**

*ມີບາງວິທີໃດແດ່ທີ່ກຸ່ມຂອງພວກເຮົາສາມາດຊ່ວຍເຫຼືອກັນແລະກັນໃນເມື່ອພວກເຮົາປະສົບຄວາມທຸກທໍຣະມານ?*

## ນຳໃຊ້ໃນຊີວິດ

ພວກເຮົາອາດບໍ່ຮູ້ວ່າເປັນຫຍັງພວກເຮົາທົນທຸກ, ແຕ່ວ່າພຣະເຈົ້າຊົງພົບກັບພວກເຮົາໃນຄວາມທຸກທໍລະມານຂອງພວກເຮົາ. ຈົ່ງໃຊ້ນິ່ງໃນການນຳໃຊ້ໃນຊີວິດຕໍ່ລົງໄປນີ້:

- **ສາລະພາບ.** ຄວາມທຸກທໍຣະມານທັງໝົດບໍ່ແມ່ນເຫດຜົນຈາກຄວາມບາບ, ແຕ່ວ່າຄວາມບາບສາມາດນຳໄປສູ່ຄວາມທຸກທໍຣະມານ. ຈົ່ງທູນຂໍຕໍ່ພຣະເຈົ້າໃຫ້ພຣະອົງຊົງເປີດເຜີຍຄວາມບາບໃນຊີວິດຂອງທ່ານ. ຈົ່ງສາຣະພາບບາບນັ້ນແລະຂອບພຣະຄຸນພຣະອົງ ສຳລັບພຣະຄຸນແລະການຊົງໃຫ້ອະພັຍໂທດ.
- **ຖວາຍພຣະກຽດພຣະເຈົ້າ.** ຈົ່ງທູນຂໍຕໍ່ພຣະເຈົ້າໃຫ້ພຣະອົງຊົງສະແດງໃຫ້ທ່ານເຫັນວ່າພຣະອົງຊົງມີພຣະປະສົງທີ່ຈະເພີ່ມຄວາມເຂັ້ມແຂງໃຫ້ທ່ານໃນຂນະທີ່ມີຄວາມທຸກທໍຣະມານ. ໃນຂນະທີ່ຈັດການກັບຄວາມຫຍຸ້ງຍາກ, ຈົ່ງຊອກຫາວິທີທີ່ຈະໃຫ້ພຣະກຽດຕິຍົດແກ່ພຣະຄຣິດ.
- **ໜູນໃຈ.** ປະສົບການຄວາມທຸກທໍຣະມານຂອງທຸກຄົນນັ້ນແຕກຕ່າງກັນ, ແຕ່ຈົ່ງແບ່ງປັນກັບບາງຄົນວ່າພຣະເຈົ້າໄດ້ຊົງຊ່ວຍທ່ານ, ຊົງເສີມສ້າງຄວາມເຂັ້ມແຂງແກ່ທ່ານ, ແລະຊົງນຳເອົາສງ່າຣາສີມາສູ່ພຣະອົງ ໃນຊ່ວງເວລາທີ່ຫຍຸ້ງຍາກຫຼື ໃນຊ່ວງເວລາຂອງຄວາມທຸກທໍຣະມານ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ SSK**